## II. ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ (ປະຈຳໄຕມາດ IV ປີ 2016)

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດໃນໄຕມາດທີ່ຜ່ານມາທຽບກັບໄຕມາດນີ້ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 9,01%, S&P500 4,72% ແລະ NASDAQ 3,33%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ຜູ້ລົງທຶນຕ່າງພາກັນປະເມີນຜົນປະໂຫຍດຂອງບາງກຸ່ມທຸລະກິດທີ່ອາດຈະໄດ້ຮັບຜົນປະໂຫຍດຈາກການທີ່ ທ່ານ ໂດນັ້ນທຳ ໄດ້ຮັບການເລືອກຕັ້ງ ເປັນປະທານາທິບໍດີ ສ.ອາເມລິກາ ຄົນໃໝ່ ໂດຍສະເພາະຄວາມເຊື່ອໝັ້ນທີ່ມີຕໍ່ກັບນະໂຍບາຍ Trumponomics ປະກອບກັບກະຊວງແຮງງານ ສ.ອາເມລິກາ ໄດ້ອອກລາຍງານ ຕົວເລກການຈ້າງງານນອກພາກກະສິກຳທີ່ເພີ່ມຂຶ້ນ 178.000 ຕຳແໜ່ງໃນເດືອນພະຈິກ ແລະ ອັດຕາການວ່າງງານກໍ່ປັບຕົວຫຼຸດລົງມາຢູ່ທີ່ລະດັບ 4,6% ເຊິ່ງເປັນລະດັບຕ່ຳສຸດນັບຕັ້ງແຕ່ເດືອນ ສິງຫາ ປີ 2007 ຫຼືຕ່ຳສຸດໃນຮອບ 9 ປີ ໂດຍກະຊວງແຮງງານ ສ.ອາເມລິກາ ຍັງແຈ້ງຕົວເລກເພີ່ມເຕີມວ່າ ພາກເອກະຊົນມີການຈ້າງງານເພີ່ມຂຶ້ນອີກ 156.000 ຕຳແໜ່ງ ແລະ ພາກລັດກໍ່ເພີ່ມຂຶ້ນອີກ 22.000 ຕຳແໜ່ງ ໂດຍການອອກລາຍງານດັ່ງກ່າວຂອງກະຊວງແຮງງານ ແມ່ນສອດຄ່ອງກັບການກ່າວປາໄສຂອງທ່ານ ເຈເນັດ ເຢເລັນ ຜູ້ວ່າການ ທະນາຄານກາງ ສ.ອາເມລິກາ ຫຼື FED ທີ່ລະບຸວ່າ ປະຈຸບັນພາກແຮງງານ ແລະ ການຈ້າງງານພາຍໃນປະເທດ ແມ່ນມີຄວາມເຂັ້ມແຂງທີ່ສຸດໃນຮອບເກືອບ 10 ປີ ໃນຂະນະທີ່ ສະມາຄົມຜູ້ສ້າງເຮືອນ ຫຼື NAHB ຂອງ ສ.ອາເມລິກາ ກໍ່ໄດ້ລາຍງານວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ສ້າງເຮືອນ ປັບຕົວເພີ່ມຂຶ້ນ 7 ຈຸດ ມາຢູ່ທີ່ 70 ຈຸດໃນເດືອນ ທັນວາ ເຊິ່ງເປັນລະດັບສູງສຸດນັບຕັ້ງແຕ່ເດືອນ ກໍລະກົດ ປີ 2005 ປະກອບກັບ ກະຊວງການຄ້າ ສ.ອາເມລິກາ ໄດ້ອອກມາລາຍງານວ່າ ສິນຄ້າຄ້າງສາງພາກການຄ້າຂາຍສົ່ງ ປະຈຳເດືອນ ຕຸລາ ປັບຕົວຫຼຸດລົງ 0,4% ເຊິ່ງເປັນການປັບຕົວຫຼຸດລົງຫຼາຍທີ່ສຸດໃນຮອບ 8 ເດືອນ ເຊັ່ນດຽວກັນກັບມູນຄ່າການຂາຍພາກການຄ້າຂາຍສົ່ງກໍ່ປັບຕົວເພີ່ມຂຶ້ນ 1,4% ໃນເດືອນ ຕຸລາ ເຊັ່ນກັນ ຈາກການປັບຕົວດັ່ງກ່າວ ໄດ້ກາຍເປັນການສົ່ງສັນຍານບົ່ງບອກວ່າ ພາກທຸລະກິດ ແລະ ຜູ້ບໍລິໂພກ ມີການໃຊ້ຈ່າຍເພີ່ມຂຶ້ນ ເຊິ່ງຖືວ່າເປັນປັດໃຈບວກໃຫ້ແກ່ເສດຖະກິດ ຈາກບັນດາປັດໃຈດັ່ງກ່າວ ຈຶ່ງສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ ເມື່ອທຽບກັບໄຕມາດກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວເພີ່ມຂຶ້ນ 5,87%, ຝຣັ່ງ (CAC40) 9,62%, ເຢຍລະມັນ (DAX) 9,89%, ລຸກຊຳບວກ (LUXXX) 8,22% ແລະ ອັງກິດ (FTSE100) 3,02%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ການປັບຕົວຫຼຸດລົງຂອງຄ່າເງິນປອນທຽບກັບໂດລາສ.ອາເມລິກາທີ່ປັບຕົວຕ່ຳສຸດໃນຮອບ 31 ປີ ທີ່ 1,272 ເຊິ່ງສົ່ງຜົນໃຫ້ ດັດຊະນີ ຕະຫຼາດຫຼັກຊັບ ອັງກິດ ປັບຕົວຂຶ້ນສູງສຸດໃນຮອບກວ່າ 17 ເດືອນ ແລະ ຈາກການຄາດການວ່າທຸລະກິດສົ່ງອອກຈະໄດ້ຮັບຈາກການປັບຕົວຫຼຸດລົງຂອງຄ່າເງິນດັ່ງກ່າວ ປະກອບກັບກອງປະຊຸມຂອງທະນາຄານກາງ ເອີຣົບ ຫຼື ECB ແມ່ນມີມະຕິ ຂະຫຍາຍເວລາໃນການຊື້ພັນທະບັດຕາມນະໂຍບາຍຜ່ອນຄາຍທາງປະລິມານ ຫຼື QE ຄວບຄູ່ກັບການດຳເນີນແຜນການໃນການສືບຕໍ່ອັດຕາດອກເບ້ຍເງິນກູ້ທີ່ລະດັບ 0,25% ເພື່ອໃຊ້ເປັນເຄື່ອງມືແລະ ນະໂຍບາຍກະຕຸ້ນເສດຖະກິດຕໍ່ໄປ ໃນຂະນະທີ່ ທະນາຄານກາງ ປະເທດ ອັງກິດ ຫຼື BOE ປະກາດ ຮັກສາອັດຕາດອກເບ້ຍທີ່ລະດັບ 0,25% ເຊິ່ງເປັນລະດັບຕ່ຳສຸດເປັນປະຫວັດການ ພ້ອມທັງປະກາດຮັກສານະໂຍບາຍໂຄງການຊື້ພັນທະບັດລັດຖະບານຕາມມາດຕະການຜ່ອນຄາຍທາງປະລິມານ ຫຼື QE ດ້ວຍມູນຄ່າ 4,35 ຕື້ປອນ ໃນການປະຊຸມຄັ້ງລ່າສຸດເພື່ອກະຕຸ້ນເສດຖະກິດຂອງປະເທດ ເຊັ່ນດຽວກັນກັບ ສະຖາບັນວິໄຈເສດຖະກິດຂອງປະເທດເຢຍລະມັນ ຫຼື Ifo ໄດ້ປັບຄາດການການຂະຫຍາຍຕົວຂອງ GDP ປະເທດ ໃນປີ 2017 ຂຶ້ນມາຢູ່ທີ່ລະດັບ 1,5% ຈາກເດີມທີ່ກຳນົດໄວ້ທີ່ 1,4% ຈາກທ່າອ່ຽງຄວາມເຂັ້ມແຂງຂອງເສດຖະກິດປະເທດໃນໄຕມາດ 4 ຈາກບັນດາປັດໃຈດັ່ງກ່າວ ຈຶ່ງສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ໃນເອີຣົບ ປັບຕົວເພີ່ມຂຶ້ນ ເມື່ອທຽບກັບໄຕມາດກ່ອນ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວຫຼຸດລົງ -6,61%, ໄຕ້ຫວັນ (TWSE) -0,26%, ຟີລິບປິນ (PCOMP) -12,89%, ກຳປູເຈຍ (CSX) -5,16%, ສສ.ຫວຽດນາມ (HANOI) -3,60%, ມາເລເຊຍ (FBMLCI) -1,76%, ສປ.ຈີນ (SHENZHEN) -0,48%, ສສ. ຫວຽດນາມ (HOCHIMIN) -0,23%, ອິນໂດເນເຊຍ (JCI) -4,33%, ຮ່ອງກົງ (HANG SENG) -7,86%. ຍົກເວັ້ນ ຕະຫຼາດຫຼັກຊັບ ສິງກະໂປ (STRAIT TIMES) ປັບຕົວເພີ່ມຂຶ້ນ 1,79%, ໄທ (SET) 1,44%, ສ.ເກົາຫຼີ (KOSPI) 0,10%, ຍີ່ປຸ່ນ (NIKKEI225) 15,69%, , ສປ.ຈີນ

(SHANGHAI) 3,69%, ອົດສະຕາລີ (S&P/ASX200) 5,13% ແລະ ມຽນມ້າ (MYANPIX) 2,29% ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ອາຊີ ສ່ວນໃຫຍ່ປັບຕົວຫຼຸດລົງແມ່ນເນື່ອງຈາກ ຕະຫຼາດທຶນ ອາຊີ ໄດ້ຮັບແຮງກົດດັນຈາກການເລືອກຕັ້ງ ປະທານາທິບໍດີ ສ.ອາເມລິກາ ແລະ ພາຍຫຼັງຈາກການປະການຜົນການເລືອກຕັ້ງ ໂດຍທ່ານ ໂດນັ້ນທຳ ໄດ້ຮັບໄຊຊະນະໃນການເລືອກຕັ້ງ ໄດ້ສົ່ງຜົນໃຫ້ຕະຫຼາດຫຼັກຊັບໃນອາຊີຕ່າງພາກັນປັບຕົວຫຼຸດລົງຢ່າງຕໍ່ເນື່ອງ ໂດຍຜູ້ລົງທຶນມີຄວາມກັງວົນຕໍ່ກັບ ຂໍ້ສັນຍາເຂດການຄ້າ ເສລີ Trans-Pacific Partnership ຫຼື TPP ເຊິ່ງເປັນຂໍ້ສັນຍາເຂດການຄ້າເສລີທີ່ໃຫ່ຍທີ່ສຸດ ອາດຈະໄດ້ຮັບຜົນກະທົບຈາກການທີ່ ວ່າທີ່ຜູ້ນຳຄົນໃໝ່ຂອງ ສ.ອາເມລິກາ ມີທ່າທີບໍ່ເຫັນດີກັບໂຄງການຄວາມຮ່ວມມືນີ້ ແລະ ອາດສົ່ງຜົນໃຫ້ໂຄງການດັ່ງກ່າວຢຸດສະງັດໄດ້ ປະກອບກັບ ທ່າທີຂອງວ່າທີ່ປະທານາທິບໍດີ ສະຫະລັດອາເມລິກາຄົນໃໝ່ ຕໍ່ກັບນະໂຍບາຍການຕ່າງປະເທດຕໍ່ກັບອາຊີກໍ່ບໍ່ມີຄວາມແນ່ນອນ ແລະ ມີທ່າທີຈະເປັນໄປດ້ານລົບນຳ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ຈຶ່ງສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ປັບຕົວຫຼຸດລົງ ເມື່ອທຽບກັບໄຕມາດກ່ອນ.

## II. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນໄຕມາດນີ້ປິດຢູ່ທີ່ 1.012,72 ຈຸດ ເພີ່ມຂຶ້ນ 4,94% ເມື່ອທຽບໃສ່ໄຕມາດຜ່ານມາ, ຕະຫຼອດໄຕມາດມີປະລິມານຊື້-ຂາຍຮຸ້ນທັງໝົດ 10,36 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 51,46 ຕື້ກີບ ເພີ່ມຂຶ້ນ 384,22% ທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 56,73% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.991 ກີບ ເພີ່ມຂຶ້ນ 319 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 273.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,36 ຕື້ກີບ ຫຼຸດລົງ 9,85% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍໄຕມາດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 31,39% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,41%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.968 ກີບ ຫຼຸດລົງ 124 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10,06 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 50,02 ຕື້ກີບ ເພີ່ມຂຶ້ນ 462,52% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 66,53% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,38%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.585 ກີບ ຫຼຸດລົງ 815 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 45,8 ລ້ານກີບ ເພີ່ມຂຶ້ນ 2.285,42% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 33,33% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2502 ກີບ ຫຼຸດລົງ 46 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 27,02 ລ້ານກີບ ຫຼຸດລົງ 84,89% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 39,44% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ ຫຼຸດລົງ 96 ກີບ ເມື່ອທຽບໃສ່ໄຕມາດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,9 ລ້ານກີບ ຫຼຸດລົງ 97,81% ເມື່ອທຽບໃສ່ໄຕມາດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 12,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

---

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ທ. ບຸນຈິງ ກອງຄຳ

**ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| | ໄຕມາດ 3 | | ໄຕມາດ 4 | | % ການປ່ຽນແປງ | |
|---|---|---|---|---|---|---|
| | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ຈຳນວນ | ມູນຄ່າການຊື້ຂາຍ |
| BCEL | 323.900 | 1.513.230.000 | 273.300 | 1.364.140.000 | -15,62 | -9,85 |
| EDL-GEN | 1.746.300 | 8.893.340.000 | 10.069.300 | 50.027.090.000 | 476,61 | 462,52 |
| LWPC | 300 | 1.920.000 | 8.200 | 45.800.000 | 2.633,33 | 2.285,42 |
| PTL | 70.200 | 178.830.000 | 10.800 | 27.020.000 | -84,62 | -84,89 |
| SVN | 13.300 | 41.180.000 | 300 | 900.000 | -97,74 | -97,81 |
| ທັງໝົດ | 2.154.000 | 10.628.500.000 | 10.361.900 | 51.464.950.000 | 381,05 | 384,22 |

**ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ**

(ວັນທີ 11 ມັງກອນ - 22 ທັນວາ 2016)




**ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ**

(ເດືອນ ມິຖຸນາ - ກັນຍາ 2016)

ຫົວໜ່ວຍ: ລ້ານກີບ



ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດສະນີ | ປະເທດ | ດັດຊະນີໃນໄຕມາດນີ້ | ດັດຊະນີໃນໄຕມາດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.941,96 | 18.293,7 | 1.648,26 | 9,01 |
| NASDAQ | ສ.ອາເມລິກາ | 5.471,43 | 5.295,18 | 176,25 | 3,33 |
| S&P500 | ສ.ອາເມລິກາ | 2.265,18 | 2.163,12 | 102,06 | 4,72 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.426,37 | 1.347,27 | 79,1 | 5,87 |
| DAX | ເຢຍລະມັນ | 11.468,64 | 10.436,49 | 1.032,15 | 9,89 |
| FTSE100 | ອັງກິດ | 7.041,42 | 6.834,77 | 206,65 | 3,02 |
| CAC40 | ຝຣັ່ງ | 4.833,82 | 4.409,55 | 424,27 | 9,62 |
| LUXXX | ລຸກຊຳບວກ | 1.685,816 | 1.557,715 | 128,101 | 8,22 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19.444,49 | 16.807,62 | 2.636,87 | 15,69 |
| KOSPI | ສ.ເກົາຫຼີ | 2.037,96 | 2.035,99 | 1,97 | 0,10 |
| HANGSHENG | ຮ່ອງກົງ | 21.809,8 | 23.669,90 | -1.860,1 | -7,86 |
| TWSE | ໄຕ້ຫວັນ | 9.204,26 | 9.228,50 | -24,24 | -0,26 |
| SHANGHAI | ສປ. ຈີນ | 3.137,43 | 3.025,87 | 111,56 | 3,69 |
| SHENZHEN | ສປ. ຈີນ | 1.996,03 | 2.005,60 | -9,566 | -0,48 |
| S&P/ASX200 | ອົດສະຕາລີ | 5.613,50 | 5.339,60 | 273,9 | 5,13 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.734,07 | 9.352,68 | -618,61 | -6,61 |
| STRAIT TIME | ສິງກະໂປ | 2.901,70 | 2.850,74 | 50,96 | 1,79 |
| SET | ໄທ | 1.508,57 | 1.487,17 | 21,4 | 1,44 |
| FBMLCI | ມາເລເຊຍ | 1.629,59 | 1.658,73 | -29,14 | -1,76 |
| JCI | ອິນໂດເນເຊຍ | 5.111,39 | 5.342,59 | -231,2 | -4,33 |
| PCOMP | ຟີລິບປິນ | 6.686,36 | 7.675,42 | -989,06 | -12,89 |
| HOCHIMIN | ສສ. ຫວຽດນາມ | 666,94 | 668,48 | -1,54 | -0,23 |
| HANOI | ສສ. ຫວຽດນາມ | 80,25 | 83,25 | -3 | -3,60 |
| CSX | ກຳປູເຈຍ | 330,19 | 348,16 | -17,97 | -5,16 |
| LSX | ສປປ. ລາວ | 1.005,2 | 981,43 | 23,77 | 2,42 |
| MYANPIX | ມຽນມ້າ | 620,87 | 606,99 | 13,88 | 2,29 |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.869,99 | 2.982,23 | 887,76 | 29,8 |
| SET BANK | ໄທ | 482,88 | 498,84 | -15,96 | -3,2 |